| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດເປັນຕົວແທນປະກັນໄພ (ສໍາລັບບຸກຄົນ) |
| **ປະເພດເອກະສານ** | ໃບອະນຸຍາດດໍາເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 01.11.2017 |
| **ພາກສ່ວນຮັບຜິດຊອບ** | ກົມຄຸ້ມຄອງວິສະຫະກິດລັດລົງທຶນ ແລະ ການປະກັນໄພ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ບຸກຄົນທີ່ມີຈຸດປະສົງເປັນຕົວແທນໃຫ້ແກ່ບໍລິສັດປະກັນໄພ ໃນການຂາຍ ແລະ ປະຕິບັດສັນຍາປະກັນໄພ ທີ່ໄດ້ຕົກລົງກັບບໍລິສັດປະກັນໄພ ພາຍໃຕ້ເງື່ອນໄຂທີ່ວ່າຕົວແທນປະກັນໄພບໍ່ໄດ້ຮັບເງິນເດືອນນໍາບໍລິສັດປະກັນໄພ ແຕ່ໄດ້ຮັບຄ່າຕອບແທນຕາມທີ່ໄດ້ຕົກລົງກັນກັບບໍລິສັດປະກັນໄພ. ຕົວແທນ ປະກັນໄພ (ບຸກຄົນທົ່ວໄປ) ສາມາດເປັນຕົວແທນໃຫ້ແກ່ 1 ບໍລິສັດປະກັນໄພຕໍ່ 1 ປະເພດຂອງ ການປະກັນໄພເທົ່ານັ້ນ. |
| **ເງື່ອນໄຂໃນການຂໍເອກະສານ** | 1. ເປັນພົນລະເມືອງລາວ, ມີທີ່ຕັ້ງ ແລະ ດໍາລົງຊີວິດຢູ່ໃນ ສປປ ລາວ;2. ມີອາຍຸ 18 ປີຂຶ້ນໄປ;3. ເປັນບຸກຄົນທີ່ມີຄວາມສາມາດທາງດ້ານການປະພຶດ;4. ບໍ່ເຄີຍຖືກສານຕັດສິນລົງໂທດ ຕັດອິດສະຫຼະພາບໃນສະຖານການກະທໍາຜິດ ໂດຍເຈດຕະນາ ເວັ້ນເສຍແຕ່ໄດ້ພົ້ນໂທດມາແລ້ວ ບໍ່ຕໍ່າກວ່າ 5 ປີກ່ອນວັນຍື່ນ ຄໍາຮ້ອງຂໍໃບອະນຸຍາດ;5. ຕ້ອງມີປະກາສະນີຍະບັດທາງດ້ານການປະກັນໄພ, ມີໃບຢັ້ງຢືນຜ່ານການສອບ ເສັງ ຫຼື ຝຶກອົບຮົມວິຊາສະເພາະດ້ານການປະກັນໄພມາກ່ອນ;6. ບໍ່ເຄີຍຖືກຖອນໃບອະນຸຍາດເປັນຕົວແທນ ຫຼື ນາຍໜ້າປະກັນໄພພາຍໃນໄລຍະ ເວລາ 5 ປີກ່ອນວັນຍື່ນຄໍາຮ້ອງຂໍໃບອະນຸຍາດ. |

| ກົດໝາຍ ແລະ ນິຕິກໍາອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ຂໍ້ຕົກລົງວ່າດ້ວຍລະບຽບການບໍລິຫານຄຸ້ມຄອງ ແລະ ການດໍາເນີນທຸລະກິດປະກັນໄພ | 3058/ກງ | 27.09.2018 | |
| ກົດໝາຍວ່າດ້ວຍ ການປະກັນໄພ (ສະບັບປັບປຸງ) | 06/ສພຊ | 21.12.2011 | ພາກທີ VI ຕົວແທນປະກັນໄພ, ນາຍໜ້າປະກັນໄພໝວດທີ 2 ນາຍໜ້າປະກັນໄພ (ມາດຕາ 81 ເຖິງ ມາດຕາ 85)ກົດໝາຍວ່າດ້ວຍການປະກັນໄພສະບັບດັ່ງກ່າວ, ປັດຈຸບັນຢູ່ໃນຂັ້ນຕອນການປັບປຸງ ແລະ ຄາດວ່າຈະປະກາດໃຊ້ໃນມໍ່ໆນີ້ |
| ຄໍາແນະນໍາ ວ່າດ້ວຍ ການອອກໃບອະນຸຍາດດໍາເນີນທຸລະກິດປະກັນໄພ | 770/ກງ | 21.03.2016 | ມາດຕາ 5, 7, 8, 9, 10 |
| ຄໍາແນະນໍາ ກ່ຽວກັບ ການປະຕິບັດກົດໝາຍ ວ່າດ້ວຍ ການປະກັນໄພ | 539/ກງ | 19.02.2014 | |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມຄຸ້ມຄອງວິສະຫະກິດລັດລົງທຶນ ແລະ ການປະກັນໄພ, ກະຊວງການເງິນ | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 15 | |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |

| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | ໃບອະນຸຍາດນີ້ ມີຜົນສັກສິດ 1 ປີ , ເລີ່ມຈາກວັນທີ 1 ມັງກອນ ເຖິງ ວັນທີ 31 ທັນວາ ແລະ ວິສາຫະກິດຕ້ອງຍື່ນຄຳຮ້ອງຂໍຕໍ່ໃບອະນຸຍາດ ແລະ ຊຳລະຄ່າທຳນຽມໃນການຕໍ່ໃບອະນຸຍາດ ພາຍໃນ 3 ເດືອນທຳອິດຂອງປີຕໍ່ໄປ (ຄືບໍ່ໃຫ້ກາຍວັນທີ 31 ມີນາຂອງທຸກໆປີ). |
|---|---|

| **ຄ່າທຳນຽມສຳລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄຳຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 300000.00 | 20000.00 | 320000.00 |
| **Comments** | ອີງຕາມ ຄຳແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 770/ກງ, ຄ່າແບບຟອມຄຳຮ້ອງ ແລະ ຄ່າອອກໃບສັ່ງມອບ (50,0000 ກີບ) ໃນການອອກໃບອະນຸຍາດດຳເນີນ ທຸລະກິດຕົວແທນປະກັນໄພແມ່ນເກັບຕາມການເຂົ້າໄປຊື້ແບບຟອມ ແຕ່ບໍ່ໄດ້ກຳນົດຄ່າທຳນຽມແບບຟອມໄວ້ໃນລະບຽບການໃດໆ.ລວມຄ່າໃຊ້ຈ່າຍທັງໝົດ: 370,000 ກີບ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນຄ່າ ທຳ ນຽມເພີ່ມເຕີມ** | | | | |

| **ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 200000.00 | 0.00 | 200000.00 |
| **ຄຳເຫັນ** | ອີງຕາມ ຄຳແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 770/ກງ, ຄ່າທຳນຽມ, ຄ່າແບບຟອມຄຳຮ້ອງ ແລະ ຄ່າອອກໃບສັ່ງມອບ (50,000 ກີບ) ໃນການອອກໃບອະນຸຍາດດຳເນີນທຸລະກິດນາຍໜ້າປະກັນໄພ ແມ່ນເກັບຕາມການເຂົ້າໄປຊື້ແບບຟອມ ແຕ່ບໍ່ໄດ້ກຳນົດຄ່າທຳນຽມແບບຟອມໄວ້ໃນລະບຽບການໃດໆລວມຄ່າໃຊ້ຈ່າຍທັງໝົດ: 250,000 ກີບ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |

| | |
|---|---|
| **ຄຳ ເຫັນກ່ຽວກັບຄ່າ<br>ທຳ<br>ນຽມຕໍ່ອາຍຸເພີມເຕີມ** | |